ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກົມຄຸ້ມຄອງແຮງງານ

ພະແນກຄວາມປອດໄພ ແລະ ສຸຂະພາບແຮງງານ

ນະຄອນຫຼວງວຽງຈັນ, ວັນທີ...6/9/2016

# ບົດບັນທຶກ

## ກອງປະຊຸມປຶກສາຫາລືການປັບປຸງວຽກງານ OSH ໃນຂະແໜງການປຸງແຕ່ງໄມ້ ແລະ ການນິຍາມໄມ້ທີ່ຖືກຕ້ອງຕາມກົດໝາຍ

ໃນຕອນເຊົ້າຂອງວັນທີ 2 ກັນຍາ 2016 ເວລາ 9:00 ໂມງ ທີ່ກະຊວງແຮງງານ ແລະ ສະຫວັດດີການສັງຄົມໄດ້ມີການຈັດກອງປະຊຸມປຶກສາຫາລື ກ່ຽວກັບການນິຍາມໄມ້ທີ່ຖືກຕ້ອງຕາມກົດໝາຍທີ່ພົວພັນກັບວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານໃນສະຖານທີ່ເຮັດວຽກ ໃນຂະແໜງການປຸງແຕ່ງໄມ້. ເຂົ້າຮ່ວມກອງປະຊຸມປຶກສາຫາລືໃນຄັ້ງນີ້ມີທ່ານ ກີ ແກ້ວເມືອງວົງ ຊ່ວຍຊານຝ່າຍລາວຈາກອົງການຈີໄອແຊັດ ອົງການຮ່ວມມື ລາວ-ເຢຍລະມັນ ປະຈຳ ສປປ ລາວ, ມີ ທ່ານຄຳພັດ ອ່ອນລາສີ ຫົວໜ້າພະແນກຄວາມປອດໄພ ແລະ ສຸຂະພາບແຮງງານ, ກົມຄຸ້ມຄອງແຮງງານ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ມີພະນັກງານວິຊາການຂອງກົມຄຸ້ມຄອງແຮງງານຈຳນວນໜຶ່ງ ລວມທັງໝົດ 6 ທ່ານ (ລາຍຊື່ຜູ້ເຂົ້າຮ່ວມຄັດຕິດມາພ້ອມນີ້).

### I. ຈຸດປະສົງຂອງກອງປະຊຸມ

ເພື່ອສ້າງການນິຍາມໄມ້ທີ່ຖືກຕ້ອງຕາມກົດໝາຍ ທີ່ກ່ຽວຂ້ອງກັບວຽກງານແຮງງານໃນຂະແໜງອຸດສາຫະກຳປຸງແຕ່ງໄມ້ທີ່ເຊື່ອມໂຍງກັບໂຄງການບັງຄັບໃຊ້ກົດໝາຍປ່າໄມ້, ການຄຸ້ມຄອງ ແລະ ການຄ້າໄມ້ ແລະ ການນິຍາມໄມ້ທີ່ຖືກຕ້ອງຕາມກົດໝາຍ ເພື່ອເປັນຂໍ້ມູນໃນການເຈລະຈາກັບປະເທດເອີຣົບ.

### II. ເນື້ອໃນກອງປະຊຸມ

- ຮັບຟັງການລາຍງານການປະກອບຄຳຄິດຄຳເຫັນໃສ່ກອງປະຊຸມໃນຄັ້ງໄລຍະຜ່ານມາໂດຍສະເພາະຜູ້ເຂົ້າຮ່ວມທີ່ມາຈາກຂະແໜງການທີ່ກ່ຽວຂ້ອງ ແລະ ຫົວໜ່ວຍທຸລະກິດຕ່າງໆ ທີ່ຕ້ອງການໃຫ້ມີການປັບປຸງ ແລະ ເພີ່ມຕື່ມອີກກ່ຽວກັບວຽກງານແຮງງານ, ວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານແມ່ນຢາກໃຫ້ກວມພາກສະໜາມກໍ່ຄືການຂຸດຄົ້ນໄມ້, ການປຸງແຕ່ງໄມ້, ການຄ້າຂາຍຜະລິດຕະພັນໄມ້.

- ໄດ້ປຶກສາຫາລື ແລະ ໄດ້ປັບປຸງບາງຂໍ້ກ່ຽວກັບການນິຍາມໄມ້ທີ່ຖືກຕ້ອງຕາມກົດໝາຍ ສ່ວນຫຼາຍແມ່ນປັບປຸງຕາມການປະກອບຄຳຄິດຄຳເຫັນທີ່ຜູ້ແທນເຂົ້າຮ່ວມກອງປະຊຸມໃນຄັ້ງກ່ອນໄດ້ມີຄຳເຫັນ.

## III. ຜົນຂອງກອງປະຊຸມ

ຜ່ານການປຶກສາຫາລືກອງປະຊຸມໄດ້ເປັນເອກະພາບໃນການປັບປຸງຮ່າງການນິຍາມໄມ້ທີ່ຖືກຕ້ອງຕາມກົດໝາຍທີ່ກ່ຽວຂ້ອງກັບວຽກງານແຮງງານ ເປັນຕົ້ນ ການປັບປຸງວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ, ສິດທິຂອງແຮງງານ, ການປະກັນສັງຄົມ ໂດຍເນັ້ນໃສ່ໃນໂຮງງານປຸງແຕ່ງໄມ້.

ໃນຕອນທ້າຍທ່ານປະທານກອງປະຊຸມກໍ່ໄດ້ສະຫລຸບຫຍໍ້ຜົນຂອງການປຶກສາຫາລື ແລະ ກອງປະຊຸມກໍ່ໄດ້ປິດລົງໃນເວລາ 12:00ໂມງ ຂອງວັນດຽວກັນນັ້ນດ້ວຍຜົນສຳເລັດຕາມລະດັບຄາດໝາຍ.

| | |
|---|---|
| ປະທານກອງປະຊຸມ | ຜູ້ບັນທຶກກອງປະຊຸມ |
| ຄຳພັດ ອອນລາສີ | |

ສະບັບຮ່າງທີ 2: 27-09-2016

## ມາດຕະຖານນິຍາມໄມ້ທີ່ຖືກຕ້ອງຕາມກົດໝາຍ 7: ພັນທະດ້ານແຮງງານ ໃນຂະແໜງການອຸດສາຫະກຳປຸງແຕ່ງໄມ້

<table>
<tr><td colspan="3">ຫຼັກການ 7.1 ຄວາມປອດໄພ ແລະ ສຸຂະພາບແຮງງານໃນຂະແໜງການປຸງແຕ່ງໄມ້</td></tr>
<tr><td colspan="3">ມາດຖານ 7.1.1 ຜູ້ປະກອບການ ຕ້ອງໄດ້ປະຕິບັດຕາມກົດໝາຍ ແລະ ລະບຽບການ ໃນການຈັດຕັ້ງປະຕິບັດ ວຽກງານ ຄວາມປອດໄພ ແລະ ສຸຂະພາບແຮງງານ</td></tr>
<tr><td>ຕົວຊີ້ວັດ 7.1.1.1 ຜູ້ປະກອບການ ໄດ້ສ້າງ ແລະ ສະໜອງນະໂຍບາຍ, ລະບຽບການ ແລະ  ຄຳແນະນຳ ກ່ຽວກັບ ຄວາມປອດໄພຂອງເຄື່ອງຈັກ ແລະ ອຸປະກອບ ໃນການປຸງແຕ່ງໄມ້, ການປ້ອງກັນສຽງ, ຂີ້ ຝຸ່ນ, ສານເຄມີທີ່ເປັນອັນຕະລາຍ, ວັດຖຸໄວໄຟ, ວັດຖຸລະເບີດ ແລະ ອາຄານ ໃນຫົວໜ່ວຍແຮງງານ ເພື່ອຄວາມປອດໄພໃນບັນດາກິດຈະກຳການປຸງແຕ່ງໄມ້.</td><td colspan="2">ຕົວຢັ້ງຢືນ<br>• ມີນະໂຍບາຍ, ລະບຽບການ ແລະ ຄຳແນະນຳ ຄວາມປອດໄພ ແລະ ສຸຂະພາບແຮງງານ ທາງດ້ານ ເຄື່ອງຈັກ ແລະ ອຸປະກອບ, ການປ້ອງກັນສຽງ, ຂີ້ຝຸ່ນ, ສານເຄມີທີ່ເປັນອັນຕະລາຍ, ວັດຖຸໄວໄຟ ແລະ ວັດຖຸລະເບີດ ໃນການປຸງແຕ່ງໄມ້.</td></tr>
<tr><td><u>ເອກະສານອ້າງອີງດ້ານນິຕິກຳ</u><br>• ກົດໝາຍວ່າດ້ວຍແຮງງານ ເລກທີ 43/ສພຊ, 24 ທັນວາ 2013 (ມາດຕາ 119)<br>• ກົດໝາຍວ່າດ້ວຍ ອຸດສາຫະກຳປຸງແຕ່ງ ເລກທີ 01/99/ສພຊ ເມສາ 1999 (ມາດຕາ 42)</td><td>ອົງການຈັດຕັ້ງຮັບຜິດຊອບ<br>• ກະຊວງແຮງງານ ແລະ ສະຫວັດດີການສັງຄົມ</td><td>ວິທີກວດກາຢັ້ງຢືນ<br>• ທົບທວນ ເອກະສານ<br>• ສຳພາດ ເຈົ້າຂອງໂຮງງານ ແລະ ຜູ້ອອກແຮງງານ</td></tr>
<tr><td>ຕົວຊີ້ວັດ 7.1.1.2 ຜູ້ປະກອບການ ໄດ້  ດຳເນີນການຝຶກອົບຮົມດ້ານນະໂຍບາຍ, ລະບຽບການ ແລະ ຄຳແນະນຳ ກ່ຽວກັບຄວາມປອດໄພ  ສຳລັບເຄື່ອງຈັກ ແລະ ອຸປະກອນ, ການປ້ອງກັນສຽງ, ຂີ້ຝຸ່ນ, ສານເຄທີ່ອັນຕະລາຍ, ວັດຖຸໄວໄຟ, ວັດຖຸລະເບີດ ແລະ ອາຄານໃນຫົວໜ່ວຍແຮງງານໃຫ້ພະນັກງານ ແລະ ຜູ້ອອກແຮງງານ ໃນບັນດາກິດຈະກຳການປຸງແຕ່ງໄມ້.</td><td colspan="2">ຕົວຢັ້ງຢືນ<br>• ບົດລາຍງານການຝຶກອົບຮົມ ໃນບັນດາຫົວຂໍ້ ຄວາມປອດໄພ ແລະ ສຸຂະພາບແຮງງານ, ບັນດາມາດຕະການປ້ອງກັນ ແລະ ຈຳນວນຜູ້ທີ່ເຂົ້າຮ່ວມໃນການຝຶກອົບຮົມ<br>• ບົດລາຍງານ ກວດກາການຝຶກອົບຮົມ  ຂອງເຈົ້າໜ້າທີ່ລັດ.</td></tr>
<tr><td><u>ເອກະສານອ້າງອີງດ້ານນິຕິກຳ</u><br>• ກົດໝາຍວ່າດ້ວຍແຮງງານ ເລກທີ 43/ສພຊ, 24 ທັນວາ 2013 (ມາດຕາ 119)</td><td>ອົງການຈັດຕັ້ງຮັບຜິດຊອບ<br>• ກະຊວງແຮງງານ ແລະ ສະ ຫວັດດີການສັງຄົມ</td><td>ວິທີກວດກາຢັ້ງຢືນ<br>• ທົບທວນເອກະສານຝຶກອົບຮົມ ແລະບົດລາຍງານການຝຶກອົບຮົມ<br>• ສຳພາດຜູ້ອອກແຮງງານ</td></tr>
<tr><td>ຕົວຊີ້ວັດ 7.1.1.3 ຜູ້ປະກອບການ ໄດ້ຈັດຕັ້ງປະຕິບັດ ນະໂຍບາຍ, ລະບຽບການ ແລະ  ຄຳ</td><td colspan="2">ຕົວຢັ້ງຢືນ</td></tr>
</table>

<table>
<tr><td>ແນະນໍາ ດ້ານຄວາມປອດໄພ ແລະ ສຸຂະພາບແຮງງານ ໂດຍແຕ່ງຕັ້ງ ພະນັກງານເພື່ອຮັບຜິດຊອບ ໃນການຈັດຕັ້ງປະຕິບັດ ບັນດາກິດຈະກໍາ ຄວາມປອດໄພ ແລະ ສຸຂະພາບແຮງງານ, ດໍາເນີນການປະເມີນຄວາມສ່ຽງດ້ານຄວາມປອດໄພ ແລະ ສຸຂະພາບ ຕໍ່ຜູ້ອອກແຮງງານ, ແລະ ຕອບສະໜອງບົດລາຍງານດ້ານອຸປະຕິເຫດ.</td><td colspan="2">• ມີ ພະນັກງານວິຊາການ ດ້ານຄວາມປອດໄພ ແລະ ສຸຂະພາບແຮງງານ ທີ່ມີຄຸນວຸດທິ ເພື່ອຈັດຕັ້ງປະຕິບັດ ແລະ ຕິດຕາມກວດກາ ຄວາມປອດໄພ ແລະ ສຸຂະພາບແຮງງານ ໃນບັນດາກິດຈະກໍາປະຈໍາວັນ<br>• ມີບົດລາຍງານ ການຈັດຕັ້ງປະຕິບັດ ຄວາມປອດໄພ ແລະ ສຸຂະພາບແຮງງານ ໃນການປຸງແຕ່ງໄມ້<br>• ມີບົດລາຍງານການປະເມີນຄວາມສ່ຽງດ້ານຄວາມປອດໄພ ແລະ ສຸຂະພາບແຮງງານ, ສະເໜີແຜນການເພື່ອປ້ອງກັນຄວາມສ່ຽງຢ່າງຕໍ່ເນື່ອງ.<br>• ມີບົດລາຍງານການເກີດອຸປະຕິເຫດແຮງງານ ທີ່ມີລະບົບການເກັບກໍາຂໍ້ມູນ ແລະລາຍງານທີ່ເໝາະສົມ.</td></tr>
<tr><td><u>ເອກະສານອ້າງອີງດ້ານນິຕິກໍາ</u><br>• ກົດໝາຍວ່າດ້ວຍແຮງງານ ເລກທີ 43/ ສພຊ, 24 ທັນວາ 2013 (ມາດຕາ 119)</td><td>ອົງການຈັດຕັ້ງຮັບຜິດຊອບ<br>• ກະຊວງແຮງງານ ແລະ ສະ ຫວັດດີການສັງຄົມ</td><td>ວິທີກວດກາຢັ້ງຢືນ<br>• ທົບທວນລະບົບການ ບໍລິຫານການ ຈັດຕັ້ງຂອງ ຫົວໜ່ວຍແຮງງານ<br>• ສໍາພາດຜູ້ອອກແຮງງານ<br>• ລົງກວດກາພາກສະໜາມ</td></tr>
<tr><td colspan="3">ມາດຖານ 7.1.2 ຜູ້ປະກອບການ ຕ້ອງໄດ້ປະຕິບັດຕາມກົດໝາຍ ແລະ ລະບຽບການ ກ່ຽວກັບ ການປ້ອງກັນສ່ວນບຸກຄົນ ໃນ ອຸດສາຫະກໍາປຸງແຕ່ງໄມ້</td></tr>
<tr><td>ຕົວຊີ້ວັດ 7.1.2.1 ຜູ້ປະກອບການໃນ ອຸດສາຫະກໍາປຸງແຕ່ງໄມ້ ໄດ້ ສະໜອງເຄື່ອງປ້ອງກັນ ສ່ວນບຸກຄົນເຊັ່ນ: ເຄື່ອງນຸ່ງ, ເກີບບູດ, ໝວກກັນກະທົບ, ເຄື່ອງກັນສຽງດັງ, ຖົງມື, ຜ້າອັດປາກ, ແວ່ນຕາກັນແສງ, ຂີ້ຝຸ່ນ ແລະ ອື່ນໆ ໃຫ້ຜູ້ອອກແຮງງານເພື່ອນໍາໃຊ້ ຕາມຄວາມຕ້ອງການໜ້າວຽກ ໃນການຜະລິດ.</td><td colspan="2">ຕົວຢັ້ງຢືນ<br>• ຈໍານວນ ເຄື່ອງນຸ່ງ, ເກີບບູດ, ໝວກກັນກະທົບ, ເຄື່ອງກັນສຽງດັງ, ຖົງມື ແລະ ຜ້າອັດປາກ ແວ່ນຕາກັນແສງ ແລະ ຂີ້ຝຸ່ນ ທຽບໃສ່ຜູ້ອອກແຮງງານ ທີ່ໄດ້ສະໜອງໃຫ້ຜູ້ອອກແຮງງານ<br>• ບົດລາຍງານ ການຊື້ ແລະ ການແຈກຈ່າຍ ອຸປະກອນປ້ອງກັນສ່ວນບຸກຄົນ ຂອງຜູ້ປະກອບການ<br>• ລະບົບຕິດຕາມກວດກາການ ແລະ ນໍາໃຊ້ອຸປະກອນປ້ອງກັນສ່ວນບຸກຄົນ ໃນໂຮງງານ<br>• ບົດລາຍການລົງກວດກາ ຂອງເຈົ້າໜ້າທີ່ລັດ.</td></tr>
<tr><td><u>ເອກະສານອ້າງອີງດ້ານນິຕິກໍາ</u><br>• ກົດໝາຍວ່າດ້ວຍແຮງງານ ເລກທີ 43/ ສພຊ, 24 ທັນວາ 2013 (ມາດຕາ 119)</td><td>ອົງການຈັດຕັ້ງຮັບຜິດຊອບ<br>• ກະຊວງແຮງງານ ແລະ ສະ ຫວັດດີການສັງຄົມ</td><td>ວິທີກວດກາຢັ້ງຢືນ<br>• ສໍາພາດຜູ້ອອກແຮງງານ<br>• ກວດກາພາກສະໜາມ</td></tr>
<tr><td>ຕົວຊີ້ວັດ 7.1.2.2 ຜູ້ປະກອບການໃນການປຸງແຕ່ງໄມ້ ໄດ້ ແນະນໍາ ແລະ ມີມາດຕະການ ໃຫ້ຜູ້ອອກແຮງງານນໍາໃຊ້ ເຄື່ອງປ້ອງກັນສ່ວນບຸກຄົນຢ່າງຖືກຕ້ອງ ຕາມກິດຈະກໍາ ທີ່ເໝາະສົມໃນໂຮງງານ, ແລະ ມີການຕິດຕາມກວດກາ ການຈັດຕັ້ງປະຕິບັດ ຢ່າງເປັນປົກກະຕິ.</td><td colspan="2">ຕົວຢັ້ງຢືນ<br>• ໃຊ້ຜ້າອັດປາກ ໃນສະຖານທີ່ເຮັດວຽກ ທີ່ທາ ຫຼື ພົ່ນສີໄມ້ ແລະ ໃນເຂດຈັກເລື່ອຍ, ຈັກຕັດ, ຈັດຄັດ, ຈັກກົບ ແລະ ບ່ອນອື່ນໆ ທີ່ມີຂີ້ຝຸ່ນ ແລະ ສານເຄມີ<br>• ໃຊ້ເກີບບູດ ໃນທຸກສະຖານທີ່ ໃນໂຮງງານ</td></tr>
</table>

<table>
<tr>
<td></td>
<td colspan="2">• ໃຊ້ໝວກກັນກະທົບ ໃນສະຖານທີ່ເຮັດ ທີ່ໃຊ້ເຄື່ອງຍົກໄມ້ , ການກອງໄມ້ ທີ່ມີຄວາມສູງ ແລະ ການເລື່ອຍໄມ້ທ່ອນ<br>• ໃຊ້ເຄື່ອງປ້ອງກັນສຽງດັງ ໃນເຂດຈັກເລື່ອຍ, ຈັກຕັດ, ຈັດ ຄັດ ແລະ ຈັກກົບໄມ້ ທີ່ເກີນມາດຕະຖານທີ່ໄດ້ກຳນົດໄວ້<br>• ໃຊ້ຖົງມື ໃນເຂດເກັບມ້ຽນເສດໄມ້ ແລະ ປ້ອນເສດໄມ້ເຂົ້າ ເຕົາອົບໄມ້<br>• ບົດລາຍງານຂອງຜູ້ປະກອບການ ໃນການຈັດຕັ້ງປະຕິບັດ ນຳໃຊ້ເຄື່ອງປ້ອງກັນສ່ວນບຸກຄົນ ຂອງກຳມະກອນ</td>
</tr>
<tr>
<td><u>ເອກະສານອ້າງອີງດ້ານນິຕິກຳ</u><br>• ກົດໝາຍວ່າດ້ວຍແຮງງານ ເລກທີ 43/ ສພຊ, 24 ທັນວາ 2013 (ມາດຕາ 119)</td>
<td>ອົງການຈັດຕັ້ງຮັບຜິດຊອບ<br>• ກະຊວງແຮງງານ ແລະ ສະ ຫວັດດີ ການສັງຄົມ<br>• ກະຊວງອຸດສາຫະ ກຳ ແລະ ການຄ້າ</td>
<td>ວິທີກວດກາຢັ້ງຢືນ<br>• ສຳພາດຜູ້ໃຊ້ແຮງງານ ແລະ ຜູ້ອອກແຮງງານ<br>• ກວດກາ ແລະ ສັງເກດ ການນຳໃຊ້ ເຄື່ອງປ້ອງກັນ ສ່ວນບຸກຄົນ ໃນແຕ່ລະ ຂົງເຂດວຽກງານປຸງແຕ່ງ ໄມ້.</td>
</tr>
<tr>
<td colspan="3"><u>ຫລັກການ 7.2 ສິດ ແລະ ຜົນປະໂຫຍດຂອງຜູ້ອອກແຮງງານ</u></td>
</tr>
<tr>
<td colspan="3">ມາດຖານ7.2.1 ຜູ້ປະກອບການຕ້ອງໄດ້ປະຕິບັດຕາມ ກົດໝາຍ ແລະ ລະບຽບການ ກ່ຽວກັບ ສິດຂອງຜູ້ອອກແຮງງານ</td>
</tr>
<tr>
<td>ຕົວຊີ້ວັດ 7.2.1.1 ຫ້າມບໍ່ໃຫ້ຜູ້ປະກອບການນຳ ໃຊ້ແຮງງານໄວໜຸ່ມທີ່ມີອາຍຸຕ່ຳກວ່າ 14 ປີເຂົ້າ ເຮັດວຽກ.</td>
<td colspan="2">ຕົວຢັ້ງຢືນ<br>• ບັນຊີ ລາຍຊື່ຜູ້ອອກແຮງງານ, ໃບສັນຍາແຮງງານເຂົ້າເຮັດ ວຽກ ແລະ ບັດປະຈຳຕົວ ຫຼື ສຳມະໂນຄົວ<br>• ບົດລາຍງານປະຈຳປີ ໃນການເຂົ້າການ ແລະ ອອກການ ຂອງຜູ້ອອກແຮງງານໃນສະຖານທີ່ປະກອບການ.<br>• ບົດລາຍງານ ຜົນການກວດກາ ຂອງເຈົ້າໜ້າທີ່ລັດ.</td>
</tr>
<tr>
<td><u>ເອກະສານອ້າງອີງດ້ານນິຕິກຳ</u><br>• ກົດໝາຍວ່າດ້ວຍແຮງງານ ເລກທີ 43/ ສພຊ, 24 ທັນວາ 2013 (ມາດຕາ 101 ແລະ 102)</td>
<td>ອົງການຈັດຕັ້ງຮັບຜິດຊອບ<br>• ກະຊວງແຮງງານ ແລະ ສະຫວັດດີ ການສັງຄົມ<br>• ກຳມະບານລາວ<br>• ສະພອຸດສາຫະກຳ ແລະ ການຄ້າ</td>
<td>ວິທີກວດກາຢັ້ງຢືນ<br>• ດຳເນີນທົບທວນ ເອກະສານຕ່າງໆ<br>• ກວດກາພາກສະໜາມ</td>
</tr>
<tr>
<td>ຕົວຊີ້ວັດ 7.2.1.2 ກ່ອນຈະຮັບຜູ້ອອກແຮງງານ ເຂົ້າເຮັດວຽກ ຜູ້ປະກອບການ ໄດ້ເຮັດສັນຍາແຮງ ງານກັບຜູ້ອອກແຮງງານເປັນລາຍລັກອັກສອນ. ເນື້ອໃນສັນຍາແຮງງານຕ້ອງສອດຄ່ອງກັບກົດ ໝາຍວ່າດ້ວຍແຮງງານ.</td>
<td colspan="2">ຕົວຢັ້ງຢືນ<br>• ສັນຍາແຮງງານສ່ວນບຸກຄົນ ຫຼື ສັນຍາແຮງງານແບບລວມ ໝູ່ ທີ່ມີເນື້ອໃນຄົບຖ້ວນ</td>
</tr>
</table>

<table>
<tr><td><u>ເອກະສານອ້າງອີງດ້ານນິຕິກຳ:</u><br>• ກົດໝາຍວ່າດ້ວຍແຮງງານ ເລກທີ 43/ສພຊ, 24 ທັນວາ 2013 (ມາດຕາ 75, 77 ແລະ 78).</td><td>ອົງການຈັດຕັ້ງຮັບຜິດຊອບ<br>• ກະຊວງແຮງງານ ແລະ ສະ ຫວັດດີການສັງຄົມ<br>• ກຳມະບານລາວ</td><td>ວິທີກວດກາຢັ້ງຢືນ<br>• ທົບທວນລະບົບ ແລະ ເນື້ອໃນ ຂອງສັນຍາແຮງງານ<br>• ສຳພາດ ຜູ້ອອກແຮງງານ<br>• ລົງຕິດຕາມກວດກາ</td></tr>
<tr><td colspan="3">ມາດຖານ 7.2.2 ຜູ້ປະກອບການຕ້ອງໄດ້ປະຕິບັດຕາມ ກົດໝາຍ ແລະ ລະບຽບການ ກ່ຽວກັບ ຜົນປະໂຫຍດຂອງຜູ້ອອກແຮງງານ</td></tr>
<tr><td>ຕົວຊີ້ວັດ 7.2.2.1 ຜູ້ປະກອບການ ໄດ້ປະຕິບັດການຈ່າຍເງິນ ເດືອນ ຫຼື ຄ່າແຮງງານ ໃຫ້ຜູ້ອອກແຮງງານຂອງຕົນ ຢ່າງເປັນປົກກະຕິ ແລະ ບໍ່ໃຫ້ຫຼຸດ ເງິນເດືອນ ຫຼື ຄ່າແຮງງານຂັ້ນ ຕໍ່າສຸດທີ່ລັດຖະບານໄດ້ກຳນົດໄວ້ໃນແຕ່ລະໄລຍະ.</td><td colspan="2">ຕົວຢັ້ງຢືນ<br>• ບັນຊີ ລາຍຊື່ຜູ້ອອກແຮງງານ ແລະ ຄ່າເງິນເດືອນ ຫຼື ຄ່າແຮງງານ<br>• ໄລຍະເວລາ ຂອງການຈ່າຍເງິນເດືອນ ໃນແຕ່ລະເດືອນ.</td></tr>
<tr><td><u>ເອກະສານອ້າງອີງດ້ານນິຕິກຳ</u><br>• ກົດໝາຍວ່າດ້ວຍແຮງງານ ເລກທີ 43/ສພຊ, 24 ທັນວາ 2013 (ມາດຕາ 105 ແລະ 108).<br>• ແຈ້ງການແນະນຳ, ເລກທີ 808/ຮລສ, 09 ກຸມພາ 2015</td><td>ອົງການຈັດຕັ້ງຮັບຜິດຊອບ<br>• ກະຊວງແຮງງານ ແລະ ສະ ຫວັດດີການສັງຄົມ<br>• ກຳມະບານລາວ<br>• ສະພາອຸດສາຫະກຳ ແລະ ການຄ້າ</td><td>ວິທີກວດກາຢັ້ງຢືນ<br>• ທົບທວນເອກະສານບັນຊີຈ່າຍເງິນເດືອນ<br>• ສຳພາດຜູ້ອອກແຮງງານ</td></tr>
<tr><td>ຕົວຊີ້ວັດ 7.2.2.2 ຜູ້ປະກອບການ ແລະ ຜູ້ອອກແຮງງານໄດ້ຈ່າຍເງິນສົມທົບເຂົ້າກອງທຶນປະກັນສັງຄົມແຫ່ງຊາດ ຕາມກົດໝາຍ ແລະ ລະບຽບການປະກັນສັງຄົມ. ຜູ້ປະກອບການໄດ້ສົ່ງຜູ້ອອກແຮງງານ ໄປກວດສຸຂະພາບ ທີ່ເຮັດວຽກ ອັນຕະລາຍ ຕາມປັດໃຈສ່ຽງ.</td><td colspan="2">ຕົວຢັ້ງຢືນ<br>• ບັນຊີລາຍຊື່ຂອງຜູ້ອອກແຮງງານທີ່ເຂົ້າເປັນສະມາຊິກຂອງປະກັນສັງຄົມ<br>• ເອກະສານການຈ່າຍເງິນສົມທົບເຂົ້າກອງທຶນປະກັນສັງຄົມຂອງຜູ້ໃຊ້ແຮງງານ<br>• ໃບຢັ້ງຢືນການກວດສຸຂະພາບປະຈຳປີ.</td></tr>
<tr><td><u>ເອກະສານອ້າງອີງດ້ານນິຕິກຳ:</u><br>• ກົດໝາຍວ່າດ້ວຍແຮງງານ ເລກທີ 43/ສພຊ, 24 ທັນວາ 2013 (ມາດຕາ 71 ແລະ 126).<br>• ກົດໝາຍວ່າດ້ວຍ ການປະກັນສັງຄົມ ເລກທີ 34/ສພຊ 26 ກໍລະກົດ 2013 (ມາດຕາ 09).</td><td>ອົງການຈັດຕັ້ງຮັບຜິດຊອບ<br>• ກະຊວງແຮງງານ ແລະ ສະ ຫວັດດີການສັງຄົມ<br>• ກະຊວງ ສາທາລະນະສຸກ</td><td>ວິທີກວດກາຢັ້ງຢືນ<br>• ທົບທວນເອກະສານ ການຈ່າຍເງິນສົມທົບ<br>• ສຳພາດ ຜູ້ອອກແຮງງານ<br>• ລົງກວດກາຕົວຈິງ</td></tr>
</table>